ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 222/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 13 ກໍລະກົດ 2021

# ແຈ້ງການ

ເຖິງ: ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

ເລື່ອງ: ເພີ່ມທະວີເອົາໃຈໃສ່ປະຕິບັດຂໍ້ຕົກລົງເພີ່ມເຕີມວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ( COVID - 19 ) ສະບັບເລກທີ 256 / ທຫລ, ລົງວັນທີ 13 ພຶດສະພາ 2021.

- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມ ດຳລັດວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ລບ, ລົງວັນທີ 18 ກຸມພາ 1999;
- ອີງຕາມ ດຳລັດວ່າດ້ວຍທຸລະກິດຊວດຈຳ ສະບັບເລກທີ 248/ລບ, ລົງວັນທີ 27 ກໍລະກົດ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 845/ທຫລ, ລົງວັນທີ 20 ກັນຍາ 2018;
- ອີງຕາມ ຂໍ້ຕົກລົງເພີ່ມເຕີມວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ( COVID - 19 ) ສະບັບເລກທີ/ 256 ທຫລ, ລົງວັນທີ 13 ພຶດສະພາ 2021;
- ອີງຕາມ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008.

ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ, ເພີ່ມທະວີເອົາໃຈໃສ່ປະຕິບັດຂໍ້ຕົກລົງເພີ່ມເຕີມວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ( COVID - 19 ) ສະບັບເລກທີ/ 256 ທຫລ, ລົງວັນທີ 13 ພຶດສະພາ 2021, ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ໃນໄລຍະເດືອນ 5, 6 ແລະ 7 / 2021, ມາຍັງກົມຄຸ້ມຄອງສະຖາບັນການເງິນ ພາຍໃນວັນທີ 30 ກໍລະກົດ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຫວັງວ່າຈະໄດ້ຮັບການຮ່ວມມືໃນການຈັດຕັ້ງປະຕິບັດເປັນຢ່າງດີ.

ຫົວໜ້າກົມ

ທະນາຄານ ແຫ່ງ ສປປ ລາວ — ກົມຄຸ້ມຄອງສະຖາບັນການເງິນ

ພູຊົງ ຈັນທະຈັກ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la